# ການເຮັດຫຍ້າແຫ້ງ

ຫຍ້າແຫ້ງເປັນພືດອາຫານສັດທີ່ນຳມາເຮັດໃຫ້ແຫ້ງ ໃນເວລາອັນສັ້ນ ໂດຍການຕາກແດດເພື່ອລຶດຄວາມຊຸ່ມໃນຫຍ້າໃຫ້ຍັງເຫລືອ 15%.

ການເຮັດຫຍ້າເປັນວິທີການໜຶ່ງທີ່ຈະຊ່ວຍເກັບ ຮັກສາພືດອາຫານສັດ ທີ່ມີຢ່າງຫລວງຫລາຍໃນຊ່ວງລະດູຝົນ ເພື່ອສຳຮອງໄວ້ລ້ຽງສັດແທນຫຍ້າສົດໃນຊ່ວງແລ້ງໂດຍຍັງຄົງຄຸນຄ່າທາງອາຫານໃກ້ຄຽງກັບຫຍ້າສົດ ແລະ ສາມາດເກັບໄວ້ດົນ.

## ພັນຫຍ້າທີ່ເໝາະສົມໃນການເຮັດຫຍ້າແຫ້ງ

ລັກສະນະຫຍ້າທີ່ໃຊ້ເຮັດຫຍ້າແຫ້ງໄດ້ດີ ຄວນມີຜົນຜະລິດສູງ, ໃບຫລາຍ, ກິ່ງກ້ານ ແລະ ລຳຕົ້ນບໍ່ແຂງ, ບໍ່ ອວບນ້ຳ ເຊັ່ນ: ຫຍ້າຣູຊີ, ຫຍ້າກີນີ, ຫຍ້າມູ ລາໂຕ, ຫຍ້າ ຂົນ, ຖົ່ວສະໄຕໂລ ເປັນຕົ້ນ.

## ວິທີເຮັດຫຍ້າ

### 1. ການຕັດຫຍ້າ:

ໄລຍະເວລາທີ່ເໝາະສົມ ເພື່ອນຳມາເຮັດຫຍ້າ ແຫ້ງຄວນເປັນໄລຍະທີ່ຫຍ້າກ່ອນອອກດອກ ຊຶ່ງຫຍ້າໃຫ້ ຜົນຜະລິດສູງ ແລະ ຄຸນນະພາບດີ ໂດຍເລືອກມື້ທີ່ແດດອອກ ແລະ ຄາດວ່າຈະບໍ່ມີຝົນຕົກຊ່ວງ 3-5 ມື້ ຕໍ່ໜ້າ ຄວນຕັດຫຍ້າໃນຊ່ວງເຊົ້າເພື່ອຕາກແດດຈົນຮອດ ຊ່ວງແລງ ເພື່ອໃຫ້ຫຍ້າແຫ້ງໄວ.



*ການຕັດຫຍ້າເພື່ອກຽມເຮັດຫຍ້າແຫ້ງ*

### 2. ການຕາກຫຍ້າ:

ເຂ່ຍຫຍ້າໃຫ້ກະຈາຍສະໝ່ຳສະເໝີລຽງເປັນແຖວ ເພື່ອສະດວກໃນການປີ້ນກັບຫຍ້າ ໃຊ້ເວລາຕາກ 2-3 ແດດແຕ່ລະວັງ ຢ່າໃຫ້ຫຍ້າແຫ້ງກອບ ຈົນໃບຫລົ່ນ ເຊິ່ງຈະເຮັດໃຫ້ສູນເສຍຄຸນຄ່າທາງອາຫານ.

ການກວດສອບຄວາມແຫ້ງ ຂອງຫຍ້າເຮັດໄດ້ ໂດຍເອົາຫຍ້າໜຶ່ງກຳມືແລ້ວບິດສວນທາງກັນ ສັງເກດເບິ່ງ ລຳຕົ້ນທີ່ແຕກຖ້າບໍ່ມີຄວາມຊຸ່ມກໍ່ສະແດງວ່າຫຍ້າແຫ້ງພໍດີ.



*ຕາກຫຍ້າແລ້ວປີ້ນກັບຫຍ້າ 3-4 ຄັ້ງ ຕໍ່ມື້*

### 3. ການເກັບຫຍ້າແຫ້ງ.

ຄວນເກັບຫຍ້າແຫ້ງໃນຊ່ວງເຊົ້າ ຂະນະທີ່ ຫຍ້າ ແຫ້ງຍັງຊຸ່ມນ້ຳໝອກຢູ່ຈະຊ່ວຍໃຫ້ໃບ ຫຍ້າບໍ່ ຫລຸດຫລົ່ນ ຈາກລຳຕົ້ນ ໂດຍການອັດໃສ່ລັງໄມ້ທີ່ມີ ຂະໜາດ 70 x 45 x 45 ຊ.ມ. ເມື່ອອັດແລ້ວຄວນຕາກແດດປະໄວ້ຕໍ່ໄປ ຈັກເຄິ່ງມື້ເພື່ອໃຫ້ນ້ຳໝອກແຫ້ງກ່ອນຈຶ່ງນຳຂຶ້ນເກັບໄວ້.



*ການອັດແຫ້ງໃສ່ລັງໄມ້*

## ການເກັບຮັກສາ

ຄວນເກັບຫຍ້າແຫ້ງໄວ້ໃນບ່ອນຮົ່ມ, ປອດໂປ່ງ, ລະບາຍອາກາດໄດ້ດີ, ສາມາດປ້ອງກັນຝົນ ແລະ ລະອອງຝົນຈະເຮັດໃຫ້ເກັບຮັກສາຫຍ້າແຫ້ງໄວ້ໄດ້ດົນ ໂດຍບໍ່ເສື່ອມຄຸນນະພາບ.



*ສະຖານທີ່ເກັບຫຍ້າແຫ້ງ*

## ຄຸນລັກສະນະຫຍ້າແຫ້ງທີ່ດີ

1. ເຮັດຈາກຫຍ້າທີ່ຕັດໃນໄລຍະທີ່ຫຍ້າມີທາດອາຫານສູງ.
2. ມີໃບຫລາຍ ລຳຕົ້ນອ່ອນ
3. ສີຂຽວກິ່ນຫອມ
4. ປັດສະຈາກວັດສະພືດອື່ນ ໆ ເຈືອປົນ
5. ບໍ່ເປັນຮາ.



# ຄູ່ມື
# ການເຮັດຫຍ້າແຫ້ງ

ມີນາ 2013




ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ
ໜ່ວຍງານຟື້ນຟູຊີວິດການເປັນຢູ່

NTPC
Powering the Future